# ເຄື່ອງບັນທຶກເວລາຂອງຜູ້ໃຫ້ບໍລິການຣັຖອໍຣິກອນ (Oregon Provider Time Capture)

## ຄູ່ມືຊ່ວຍເຫຼືອ

ຄູ່ມືນີ້ແມ່ນສໍາລັບຜູ້ບໍລິໂພກ, ຕົວແທນລະຫວ່າງຜູ້ບໍລິໂພກ-ນາຍຈ້າງ, ລູກຈ້າງທີ່ເຮັດວຽກການເບິ່ງແຍງຢູ່ເຮືອນ, ແລະລູກຈ້າງທີ່ເຮັດວຽກຮັບໃຊ້ສ່ວນບຸກຄົນ. ມັນລວມມີຂໍ້ມູນກ່ຽວກັບ:

- ວິທີການເລີ່ມນໍາໃຊ້ລະບົບບັນທຶກເວລາແບບອີເລັກໂຕຣນິກ ທີ່ເອີ້ນວ່າ OR PTC DCI (Oregon Provider Time Capture Direct Care Innovations), ແລະ
- ບຸກຄົນສໍາລັບຕິດຕໍ່ ຖ້າວ່າ ທ່ານຕ້ອງການຄວາມຊ່ວຍເຫຼືອ.

## ສາລະບານ


**ພາບລວມ** ........ 2

**ເລືອກຕົວເລືອກສໍາລັບການບັນທຶກເວລາ** ........ 2

**ຂໍ້ມູນການລັອກອິນເຂົ້າລະບົບ** ........ 4

**ເລີ່ມຕົ້ນດ້ວຍຕົວເລືອກ OR PTC DCI ແຕ່ລະອັນ** ........ 5

**ຕ້ອງການຄວາມຊ່ວຍເຫຼືອບໍ່?** ........ 7

**ຄໍາຖາມທີ່ຖາມເລື້ອຍໆ** ........ 8

## ພາບລວມ

- OR PTC DCI ຫຍໍ້ມາຈາກຄຳວ່າ Oregon Provider Time Capture Direct Care Innovations. ລະບົບບັນທຶກເວລາແບບອີເລັກໂຕຣນິກນີ້ ນຳໃຊ້ແທນເອົາເຈີ ແບບເຈັ້ງໃນເດືອນກັນຍາ 2021.
- ໃນຖານະເປັນສ່ວນໜຶ່ງຂອງກົດໝາຍວ່າດ້ວຍ  ກົດໝາຍວ່າດ້ວຍການປິ່ນປົວໃນສັດຕະວັດທີ 21 (Century Cures Act), ຣັຖບານກາງກຳນົດວ່າ ຣັຖຕ້ອງເກັບຮອບຮອມຂໍ້ມູນບາງຢ່າງທາງອີເລັກໂຕຣນິກ ເມື່ອມີການໃຫ້ບໍລິການການເບິ່ງແຍງສ່ວນບຸກຄົນ. ສິ່ງນີ້ເອີ້ນວ່າ ການກວດສອບການໃຫ້ບໍລິການທາງອີເລັກໂຕຣນິກ (Electronic Visit Verification, EVV).
- ເຄື່ອງມືລະບົບ OR PTC DCI ຈະບັນທຶກຂໍ້ມູນຕໍ່ໄປນີ້ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດ EVV ຂອງຣັຖບານກາງ
    - ປະເພດຂອງການບໍລິການ
    - ຜູ້ບໍລິໂພກຮັບເອົາການບໍລິການ
    - ຜູ້ໃຫ້ບໍລິການໃຫ້ການບໍລິການ
    - ວັນທີຂອງການໃຫ້ບໍລິການ
    - ສະຖານທີ່ທີ່ໃຫ້ບໍລິການ, ແລະ
    - ເວລາທີ່ເລີ່ມໃຫ້ບໍລິການ ແລະເວລາທີ່ສິ້ນສຸດການບໍລິການ
- ມີຕົວເລືອກທີ່ແຕກຕ່າງກັນຂອງລະບົບ OR PTC DCI ເພື່ອໃຫ້ເລືອກໃຊ້ໃນການບັນທຶກເວລາທີ່ໄດ້ເຮັດວຽກ. ຜູ້ໃຫ້ບໍລິການ ແລະຜູ້ບໍລິໂພກ ຄວນເຮັດວຽກຮ່ວມມືກັນເພື່ອຊອກຫາວິທີທີ່ດີທີ່ສຸດສຳລັບເຂົາເຈົ້າ.  ທ່ານອາດນຳໃຊ້ວິທີການຫຼາຍວິທີ ຖ້າວ່າຈຳເປັນ, ແຕ່ທ່ານຈຳຕ້ອງນຳໃຊ້ແຕ່ພຽງວິທີດຽວໃນແຕ່ລະຄັ້ງໃນລະຫວ່າງພຽນວຽກຂອງທ່ານ.  ຍົກຕົວຢ່າງ, ຖ້າວ່າ ທ່ານປ້ອນໂມງເຂົ້າໃນແອັບມືຖື, ທ່ານຈະຕ້ອງປ້ອນໂມງອອກໃນແອັບມືຖື.

## ເລືອກຕົວເລືອກສຳລັບການບັນທຶກເວລາ

### OR PTC DCI ແອັບມືຖື

ແອັບຟຣີໃນມືຖືນີ້ແມ່ນຕົວເລືອກທີ່ນິຍົມຫຼາຍທີ່ສຸດ. ບັນດາຜູ້ໃຫ້ບໍລິການສາມາດນຳໃຊ້ແອັບມືຖືໄດ້ທຸກມື້ ເພື່ອປ້ອນໂມງເຂົ້າ, ໂມງອອກ, ເບິ່ງຈຳນວນຊົ່ວໂມງ ແລະຂຽນໝາຍເຫດຕ່າງໆ.  ໃນແອັບມືຖື, ຜູ້ບໍລິໂພກແມ່ນບໍ່ຕ້ອງເຮັດຫຍັງເລີຍ, ແຕ່ກໍສາມາດເຮັດໄດ້ ຖ້າວ່າຕ້ອງການ.  ຜູ້ບໍລິ

ໂພກມີທາງເລືອກໃນການລົງຊື່ໂດຍນຳໃຊ້ PIN/ລະຫັດຜ່ານ ຫຼື ລາຍເຊັນອີເລັກໂຕຣນິກ, ຫຼື ເຂົາເຈົ້າສາມາດທີ່ຈະບໍ່ເຮັດຫຍັງເລີຍກໍໄດ້.

ແອັບມືຖືແມ່ນສາມາດເຂົ້າເຖິງໄດ້ສຳລັບບັນດາຜູ້ພິການ ແລະມີໃນພາສາອັງກິດ, ສະເປນ, ຣັດເຊັຽ, ຈີນແບບໃໝ່, ວຽດນາມ, ອາຣາບິກ ແລະໂຊມາລີ (ຕໍ່ໄປ ຈະເພີ່ມພາສາອື່ນໆ ອີກ). ແອັບມືຖື ຍັງມີໂຫມດອັອບລາຍ ສະນັ້ນ ຜູ້ບໍລິໂພກສາມາດລົງໂມງເຂົ້າ ແລະໂມງອອກ ໄດ້ໂດຍບໍ່ຕ້ອງເຊື່ອມ ຕໍ່ກັບອິນເຕີເນັດ.  ຜູ້ໃຫ້ບໍລິການສາມາດສ້າງການລາຍການໄດ້ເຖິງ 10 ລາຍການ ໃນເວລາສູງ ສຸດບໍ່ເກີນ 5 ມື້ຕິດຕໍ່ກັນ ໂດຍບໍ່ຕ້ອງມີອິນເຕີເນັດ ຫຼື ການເຊື່ອມຕໍ່ກັບໄວຟາຍ. ຊອກຫາ **OR PTC DCI** ໃນ Apple App Store ຫຼື Google Play ສໍາລັບລະບົບແອນດຣອຍ.

ໄອຄອນ OR PTC DCI ໃນແອັບມືຖື

## OR PTC DCI ໃນລະບົບໂທລະສັບຕັ້ງໂຕະ

ຖ້າວ່າ ຜູ້ໃຫ້ບໍລິການບໍ່ມີໂທລະສັບມືຖື ຫຼື ອຸປະກອນສຳລັບບັນທຶກເວລາ, ແລະຜູ້ບໍລິໂພກມີໂທລະ ສັບຕັ້ງໂຕະ, OR PTC DCI ໃນລະບົບໂທລະສັບຕັ້ງໂຕະ ກໍແມ່ນຕົວເລືອກທີ່ດີ. ຜູ້ໃຫ້ບໍລິການໃຊ້ ລະບົບໂທລະສັບຕັ້ງໂຕະຂອງຜູ້ບໍລິໂພກ ເພື່ອປ້ອນຂໍ້ມູນເວລາ ໂດຍປະຕິບັດຕາມສັນຍານແຈ້ງ ເຕືອນໃນໂທລະສັບ.  ວິທີນີ້ສາມາດນຳໃຊ້ເພື່ອປ້ອນເວລາຕາມຈິງໄດ້ ຫຼື ເພື່ອປ້ອນເວລາສຳລັບ ວັນກ່ອນໜ້າກໍໄດ້.  ໝາຍເຫດ: ເພື່ອນຳໃຊ້ຕົວເລືອກນີ້, ເບີໂທລະສັບລະບົບຕັ້ງໂຕະຂອງຜູ້ບໍລິໂພກ ຕ້ອງຖືກຕ້ອງກົງກັນກັບເບີໂທລະສັບລະບົບຕັ້ງໂຕະທີ່ ODHS/OHA ມີໃນແຟ້ມສຳລັບຜູ້ ບໍລິໂພກນັ້ນ.

OR PTC DCI ເບີໂທລະສັບຕັ້ງໂຕະ:

- ພາສາອັງກິດ ແລະສະເປນ: 844-856-9560
- ພາສາອັງກິດ ແລະວຽດນາມ: 833-640-1295
- ພາສາອັງກິດ ແລະຣັດເຊັຽ: 844-334-7318

• ພາສາອັງກິດ ແລະຈີນແມນດາຣິນ: 844-331-0241

• ພາສາອັງກິດ ແລະອາຣາບິກ: 844-311-4160

## OR PTC DCI fob

ຖ້າວ່າ ຜູ້ບໍລິໂພກບໍ່ມີໂທລະສັບຕັ້ງໂຕະ ແລະບໍ່ມີໃຜມີອຸປະກອນສຳລັບບັນທຶກເວລາ, ຜູ້ບໍລິໂພກສາມາດຕິດຕາມກວດເບິ່ງເວລາໄດ້ໂດຍການນຳໃຊ້ fob. fob ແມ່ນອຸປະກອນຂະໜາດນ້ອຍທີ່ມັກຈະຢູ່ໃນເຮືອນຂອງຜູ້ບໍລິໂພກ ຊຶ່ງເປັນບ່ອນທີ່ໃຫ້ບໍລິການ. ເຄື່ອງ fob ຈະສ້າງລະຫັດຂຶ້ນມາ 6 ຕົວ ຊຶ່ງເອີ້ນວ່າ "ໂທເຄັນ (tokens)" ໃນເວລາເລີ່ມຕົ້ນ ແລະສິ້ນສຸດແຕ່ລະຜຽນວຽກ. ຜູ້ໃຫ້ບໍລິການຂຽນລະຫັດເຫຼົ່ານີ້ທຸກມື້ໃນເຈ້ຍ, ຈາກນັ້ນ ປ້ອນຂໍ້ມູນທາງອີເລັກໂຕຣນິກເຂົ້າໃນເວັບໄຊລວມ OR PTC DCI ທີ່ [https://orptc.dcisoftware.com/](https://orptc.dcisoftware.com/) ກ່ອນສິ້ນສຸດໄລຍະຈ່າຍເງິນຄ່າຈ້າງ. ສຳລັບຜູ້ບໍລິໂພກ, ບໍ່ຈຳເປັນຕ້ອງເຮັດຫຍັງອີກໃນເວລານຳໃຊ້ເຄື່ອງ fob. ຖ້າວ່າ ຈຳເປັນຕ້ອງໃຊ້ເຄື່ອງ fob ຜູ້ບໍລິໂພກ ຫຼື ຜູ້ໃຫ້ບໍລິການ ຕ້ອງຕິດຕໍ່ຫາຜູ້ຈັດການກໍລະນີຂອງຜູ້ບໍລິໂພກ ເພື່ອສົ່ງຄຳຮ້ອງຂໍເອົາເຄື່ອງ fob.

ຂໍໃຫ້ອ້າງອີງ ຄູ່ມືອ້າງອີງສະບັບຫຍໍ້-ວິທີການໃຊ້ເຄື່ອງ Fob ເພື່ອຮຽນຮູ້ຕື່ມກ່ຽວກັບວິທີນຳໃຊ້ເຄື່ອງ fob.

ຮູບພາບຂອງເຄື່ອງ fob: 


# ຂໍ້ມູນການລັອກອິນເຂົ້າລະບົບ

ທ່ານສາມາດລັອກອິນເຂົ້າລະບົບ OR PTC DCI ໄດ້ເມື່ອທ່ານໄດ້ຮັບຄູ່ມືນີ້.

**ຂໍ້ມູນການລັອກອິນເຂົ້າລະບົບສຳລັບ OR PTC DCI ໃນແອັບມືຖື ແລະເວັບໄຊລວມ OR PTC DCI:**

**ຊື່ຜູ້ໃຊ້: ຊື່.ນາມສະກຸນ**

**(ຍົກຕົວຢ່າງ:** john.smith)

ຊື່ຜູ້ໃຊ້ຂອງທ່ານ ທໍາມະດາແລ້ວ ຈະແມ່ນຊື່ ແລະນາມສະກຸນຂອງທ່ານ. ຖ້າວ່າ ທ່ານມີບັນຫາຫຍຸ້ງຍາກໃນການລັອກອິນ, ກະລຸນາຕິດຕໍ່ຫ້ອງການໃນເຂດຂອງທ່ານ.

**ລະຫັດຜ່ານຊົ່ວຄາວ: ORptc2021!**

ນໍາໃຊ້ລະຫັດຜ່ານຊົ່ວຄາວນີ້ໃນຄັ້ງທໍາອິດທີ່ທ່ານລັອກອິນ, ຈາກນັ້ນ ທ່ານຈະຖືກຂໍໃຫ້ປ່ຽນລະຫັດຜ່ານເພື່ອຮັກສາຄວາມປອດໄພໃຫ້ແກ່ລະຫັດຜ່ານທີ່ທ່ານເລືອກເອງ. ເມື່ອທ່ານປ່ຽນລະຫັດຜ່ານ, ຂໍໃຫ້ຈື່ກົດລະບຽບຕໍ່ໄປນີ້ໄວ້ສະເໝີ. ລະຫັດຜ່ານຂອງທ່ານ:

- ຕ້ອງມີຢ່າງໜ້ອຍ 10 ຕົວອັກສອນ
- ຕ້ອງມີໜຶ່ງຕົວພິມໃຫຍ່, ໜຶ່ງຕົວພິມນ້ອຍ, ໜຶ່ງຕົວເລກ ແລະໜຶ່ງສັນຍາລັກພິເສດ
- ຕ້ອງບໍ່ມີຕົວອັກສອນຊໍ້າກັນຫຼາຍກວ່າສອງຕົວຕິດກັນ
- ຕ້ອງບໍ່ມີຕົວອັກສອນຊໍ້າກັນຫຼາຍກວ່າສອງຕົວຈາກຊື່ຜູ້ໃຊ້ຂອງທ່ານ

<u>ຍົກຕົວຢ່າງ:</u> ຖ້າວ່າ ຊື່ຜູ້ໃຊ້ຂອງທ່ານແມ່ນ john.smith, ຄໍາວ່າ JSmith175qw4! ຈະໃຊ້ເປັນລະຫັດຜ່ານບໍ່ໄດ້ ຍ້ອນວ່າ ມັນມີຕົວອັກສອນຕິດກັນຢ່າງໜ້ອຍ 3 ຕົວຊຶ່ງມາຈາກຊື່ຜູ້ໃຊ້ຂອງທ່ານ.

ທ່ານຕ້ອງປ່ຽນລະຫັດຜ່ານ OR PTC DCI ຂອງທ່ານທຸກ 60 ວັນ, ແລະທ່ານບໍ່ສາມາດນໍາໃຊ້ສ່ວນໃດໆ ຂອງລະຫັດຜ່ານ 24 ຕົວຫຼ້າສຸດຂອງທ່ານໄດ້.

### PIN

PIN ຈະຖືກກໍານົດໃຫ້ແກ່ຜູ້ໃຊ້ທຸກຄົນ ໂດຍອີງຕາມເລກສີ່ຕົວສຸດທ້າຍຂອງເບີໂທລະສັບຕັ້ງໂຕະຂອງເຂົາເຈົ້າ. ຖ້າວ່າ ບໍ່ມີເບີໂທລະສັບຕັ້ງໂຕະຢູ່ໃນໄຟລ໌, ເລກ PIN ທີ່ຕັ້ງຄ່າໄວ້ແມ່ນເລກ 0000. ເລກ PIN ນີ້ຖືກນໍາໃຊ້ເພື່ອລັອກອິນ ຫຼື ລົງຊື່ອະນຸມັດເວລາໃນແອັບມືຖື ຫຼື ໂທລະສັບຕັ້ງໂຕະ.

## ເລີ່ມຕົ້ນດ້ວຍຕົວເລືອກ OR PTC DCI ແຕ່ລະອັນ

### OR PTC DCI ໃນແອັບມືຖື

ຖ້າວ່າ ທ່ານຕ້ອງການນໍາໃຊ້ OR PTC DCI ໃນແອັບມືຖື, ທ່ານກໍພຽງແຕ່ດາວໂຫຼດແອັບຟຣີໃນໂທລະສັບມືຖືຂອງທ່ານ ຫຼື ອຸປະກອນອີເລັກໂຕຣນິກຂອງທ່ານ. ແອັບມືຖືແມ່ນຮອງຮັບໂດຍລະບົບ Android ເວີຊັ່ນ 8 ຂຶ້ນໄປ ແລະຊອຟແວ Apple ເວີຊັ່ນ 13 ຂຶ້ນໄປ.

ຈາກນັ້ນ ທ່ານສາມາດນໍາໃຊ້ຂໍ້ມູນລັອກອິນຂອງທ່ານ ເພື່ອເຂົ້າລະບົບໃນແອັບມືຖື.

### OR PTC DCI ລະບົບໂທລະສັບຕັ້ງໂຕະ

<u>ຜູ້ບໍລິໂພກ:</u> ໃຫ້ໝັ້ນໃຈວ່າ ເບີໂທລະສັບຕັ້ງໂຕະທີ່ຖືກຕ້ອງນັ້ນມີຢູ່ໃນແຟ້ມທີ່ ODHS/OHA. ຖ້າວ່າ ເບີຂອງທ່ານມີຢູ່ໃນແຟ້ມ ແລະຂໍ້ມູນຂອງທ່ານກໍຖືກຕັ້ງຂຶ້ນມາໃນລະບົບ OR PTC DCI ແລ້ວ, ດັ່ງນັ້ນ ທ່ານກໍບໍ່ຈໍາເປັນຕ້ອງເຮັດຫຍັງອີກສໍາລັບຕົວເລືອກລະບົບໂທລະສັບຕັ້ງໂຕະ.

ຖ້າວ່າ ທ່ານປະສົບກັບບັນຫາ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ໃຫ້ໝັ້ນໃຈວ່າ ທ່ານກໍາລັງນໍາໃຊ້ເບີໂທລະສັບຕັ້ງໂຕະອັນດຽວກັນກັບທີ່ຢູ່ໃນແຟ້ມທີ່ ODHS/OHA ສໍາລັບຜູ້ບໍລິໂພກ.

ຖ້າວ່າ ທ່ານຍັງຄົງຕ້ອງການຄວາມຊ່ວຍເຫຼືອ, ໂທສູນຊ່ວຍເຫຼືອ DCI ທີ່ເບີໂທ 1-855-565-0155 ຫຼື ອີເມວ ORPTCSupport@dcisoftware.com.

## OR PTC DCI fob

ຖ້າວ່າ ຜູ້ໃຫ້ບໍລິການບໍ່ສາມາດເຂົ້າເຖິງໂທລະສັບມືຖື ຫຼື ອຸປະກອນອີເລັກໂຕຣນິກ ແລະຜູ້ບໍລິໂພກກໍບໍ່ມີໂທລະສັບຕັ້ງໂຕະ, ຕົວເລືອກອີກອັນໜຶ່ງກໍແມ່ນ OR PTC DCI fob. ຖ້າວ່າ ຈໍາເປັນຕ້ອງໃຊ້ fob, ຜູ້ບໍລິໂພກຕ້ອງຮ້ອງຂໍເອົາເຄື່ອງໜຶ່ງຈາກຫ້ອງການໃນເຂດຂອງເຂົາເຈົ້າ. ມັນອາດໃຊ້ເວລາຫຼາຍອາທິດສໍາລັບຜູ້ບໍລິໂພກທີ່ຈະຮັບເອົາເຄື່ອງ fob ທາງໄປສະນີ. ໃນຂະນະລໍຖ້າເຄື່ອງ fob ມາຮອດ, ຜູ້ໃຫ້ບໍລິການສາມາດສ້າງລາຍການປະຫວັດເວລາໃນໃນເວັບໄຊລວມໄດ້. ກະລຸນາຮັບຮູ້ວ່າ ບໍ່ຄວນນໍາໃຊ້ລາຍການປະຫວັດເວລາເປັນປະຈໍາ, ແຕ່ສະເພາະເມື່ອຜູ້ໃຫ້ບໍລິການບໍ່ສາມາດນໍາໃຊ້ວິທີການໃດໜຶ່ງໃນຕົວເລືອກ EVV ໄດ້.

ເມື່ອໄດ້ຮັບເຄື່ອງແລ້ວ, ກະລຸນາເກັບຮັກສາເຄື່ອງ fob ໄວ້ໃນບ່ອນທີ່ປອດໄພໃນສະຖານທີ່ທີ່ຜູ້ບໍລິໂພກຈະໄດ້ຮັບການບໍລິການ. ຜູ້ໃຫ້ບໍລິການຄວນຈະສາມາດເຂົ້າເຖິງເຄື່ອງ fob ໄດ້ຢ່າງງ່າຍດາຍໃນເວລາເລີ່ມວຽກ ແລະເວລາສິ້ນສຸດວຽກຂອງຕົນເອງ. ຜູ້ບໍລິໂພກບໍ່ຈໍາເປັນຕ້ອງເຮັດຫຍັງອີກ.

ຜູ້ໃຫ້ບໍລິການຈະຈໍາເປັນຕ້ອງບັນທຶກລະຫັດ fob ຂອງເຂົາເຈົ້າ ແລະລົງວັນທີ ແລະເວລາທີ່ໄດ້ເຮັດວຽກໄປແລ້ວ. ທ່ານສາມາດຊອກຫາໃບບັນທຶກເວລາເຮັດວຽກ fob ຕາມທີ່ແນະນໍາ ເພື່ອບັນທຶກຂໍ້ມູນນີ້ໃນເວັບໄຊ PTC, PTC.Oregon.gov, ໃນຫົວຂໍ້ ສື່ການຮຽນຮູ້ (Learning Materials). ໃບບັນທຶກເວລາເຮັດວຽກນີ້ມີໃຫ້ໃນຫຼາຍພາສາ. ໝາຍເຫດ: ໃບບັນທຶກເວລາເຮັດວຽກແມ່ນເພື່ອເປັນບັນທຶກຂອງທ່ານເທົ່ານັ້ນ ແລະບໍ່ສາມາດເອົາໄປສົ່ງທີ່ຫ້ອງການໃນເຂດພື້ນທີ່ຂອງທ່ານໄດ້. ທ່ານຕ້ອງປ້ອນຂໍ້ມູນຜຽນວຽກຂອງທ່ານ ແລະລະຫັດ fob ລົງໃນເວັບໄຊລວມ ເພື່ອຈະໄດ້ຮັບຄ່າຈ້າງສໍາລັບເວລາທີ່ໄດ້ເຮັດວຽກໄປແລ້ວ.

ຖ້າວ່າ ທ່ານໄດ້ຮັບເຄື່ອງ fob ຊຶ່ງໃຊ້ການບໍ່ໄດ້ ຫຼື ເພພັງ, ກະລຸນາຕິດຕໍ່ PTC.Support@odhsoha.oregon.gov ຫຼື ຫ້ອງການໃນເຂດພື້ນທີ່ຂອງທ່ານ.

## ຕ້ອງການຄວາມຊ່ວຍເຫຼືອບໍ່?

ແຄດຕາລັອກ [ສື່ການຮຽນຮູ້ສໍາລັບຜູ້ໃຫ້ບໍລິການ (Provider Learning Materials Catalog)] ມີຊັບພະຍາກອນສໍາລັບການຮຽນຮູ້ຢ່າງຫຼວງຫຼາຍ ສໍາລັບບັນດາຜູ້ໃຫ້ບໍລິການ ລວມເຖິງ [ຄູ່ມືຜູ້ໃຫ້ບໍລິການ (Provider Guide)], ຄູ່ມືອ້າງອີງສະບັບຫຍໍ້ (QRGs), ການຮຽນຮູ້ທາງອອນລາຍ, ແລະວິດີໂອ.

ແຄດຕາລັອກລາຍການສື່ການຮຽນຮູ້ສໍາລັບຜູ້ໃຫ້ບໍລິການ:

- عربي (Arabic)
- 简体中文 (Simplified Chinese)
- 繁體中文 (Traditional Chinese)
- فارسی (Farsi)
- ខ្មែរ (Khmer/Cambodian)
- 한국어 (Korean)
- ພາສາລາວ (Lao)
- नेपाली (Nepali)
- Română (Romanian)
- Русский (Russian)
- Soomaali (Somali)
- Español (Spanish)
- Tiếng Việt (Vietnamese)

## ການສະໜັບສະໜູນສໍາລັບລູກຈ້າງທີ່ເຮັດວຽກເບິ່ງແຍງຢູ່ເຮືອນ (Homecare Workers, HCWs)

ລູກຈ້າງທີ່ເຮັດວຽກເບິ່ງແຍງຢູ່ເຮືອນ ກໍແມ່ນຜູ້ໃຫ້ບໍລິການດ້ານການເບິ່ງແຍງຢູ່ໃນເຮືອນ ຊຶ່ງການບໍລິການຂອງເຂົາເຈົ້ານັ້ນໄດ້ຮັບການອະນຸມັດຜ່ານກະຊວງປະຊາສົງເຄາະຣັຖອໍຣິກອນ (ODHS).

**ຕິດຕໍ່ຫ້ອງການ ODHS ໃນເຂດຂອງທ່ານ** ຖ້າວ່າ ທ່ານມີຄໍາຖາມກ່ຽວກັບແຜນການບໍລິການ, ວຽກງານ, ຈໍານວນຊົ່ວໂມງທີ່ອະນຸມັດ, ນະໂຍບາຍ, ຂໍ້ມູນຕິດຕໍ່ລ່າສຸດ ຫຼື ພຽງແຕ່ເລີ່ມຕົ້ນໃນຖານະເປັນຜູ້ໃຫ້ບໍລິການລາຍໃໝ່ ຫຼື ຜູ້ບໍລິໂພກລາຍໃໝ່.

ຕິດຕໍ່ ຄະນະກໍາມະການດູແລການເບິ່ງແຍງຢູ່ເຮືອນ ສໍາລັບຄໍາຖາມທີ່ກ່ຽວພັນກັບຜູ້ບໍລິໂພກ ແລະຄໍາຄິດເຫັນຕ່າງໆ ໂດຍນໍາໃຊ້ຟອມສົ່ງຄໍາຄິດເຫັນທາງອອນລາຍ **(OHCC Comment Submission Form)**.

### ການສະໜັບສະໜູນສຳລັບລູກຈ້າງທີ່ເຮັດວຽກຮັບໃຊ້ສ່ວນບຸກຄົນ

ລູກຈ້າງທີ່ເຮັດວຽກຮັບໃຊ້ສ່ວນບຸກຄົນ ກໍແມ່ນຜູ້ໃຫ້ບໍລິການເບິ່ງແຍງໃນເຮືອນໃນດ້ານສຸຂະພາບການປະພຶດ ຊຶ່ງການບໍລິການຂອງເຂົາເຈົ້ານັ້ນໄດ້ຮັບການອະນຸມັດຜ່ານ Oregon Health Authority (OHA).

ຖ້າວ່າ ທ່ານເປັນຄົນໃໝ່ ແລະຕ້ອງການຄວາມຊ່ວຍເຫຼືອໃນການເລີ່ມຕົ້ນກັບ OR PTC DCI, ຕ້ອງການທີ່ຈະຢືນຢັນຊື່ຜູ້ໃຊ້ຂອງທ່ານ, ຫຼື ມີບະເດັນກ່ຽວກັບການຈ່າຍເງິນ, ກະລຸນາຕິດຕໍ່ 503-945-9708 ຫຼື PC.20@odhsoha.oregon.gov.

ຖ້າວ່າ ທ່ານມີຄຳຖາມກ່ຽວກັບຈຳນວນຊົ່ວໂມງທີ່ອະນຸມັດ, ຂໍ້ຍົກເວັ້ນຕ່າງໆ, ແຜນການບໍລິການ ຫຼື ວຽກງານ, ຕິດຕໍ່ Comagine ທີ່ເບີໂທ 888-416-3184 ຫຼື ORBHSupport@comagine.org.

### ສູນຊ່ວຍເຫຼືອ DCI

ໂທ 1-855-565-0155 ຫຼື ອີເມວ ORPTCSupport@dcisoftware.com ສຳລັບຄວາມຊ່ວຍເຫຼືອໃນດ້ານ:

- ການນຳໃຊ້ລະບົບພື້ນຖານ
- ການລັອກອິນເຂົ້າລະບົບ, ແລະ
- ຂໍ້ຜິດພາດໃນລະບົບ (ໜ້າເວັບຄ້າງ, ຂໍ້ຜິດພາດຕ່າງໆ ໃນເຊີເວີ, ອື່ນໆ.)

### ການສະໜັບສະໜູນລະບົບ Provider Time Capture

ອີເມວ PTC.Support@odhsoha.oregon.gov ຖ້າວ່າ ທ່ານບໍ່ສາມາດຮັບເອົາການຊ່ວຍເຫຼືອທີ່ທ່ານຕ້ອງການໄດ້ຈາກແຫຼ່ງຊ່ວຍເຫຼືອໃດໜຶ່ງ.

## ຄຳຖາມທີ່ຖາມເລື້ອຍໆ

ຂ້າງລຸ່ມນີ້ແມ່ນລາຍການຄຳຖາມທົ່ວໄປ ຊຶ່ງຖາມໂດຍ ບັນດາຜູ້ໃຫ້ບໍລິການ ແລະຜູ້ບໍລິໂພກຕ່າງໆ. ສຳລັບລາຍການຄຳຖາມທີ່ຖາມເລື້ອຍໆ ຫຼ້າສຸດ, ເບິ່ງທີ່ເວັບໄຊ PTC.Oregon.gov.

### ມີຂໍ້ຍົກເວັ້ນໃນການນຳໃຊ້ OR PTC DCI ບໍ່? ຂ້າພະເຈົ້າສາມາດເກັບເວລາຈິງແບບເຈັ້ຽໄວ້ໄດ້ບໍ່?

ບໍ່ໄດ້. ເນື່ອງຈາກເປັນຂໍ້ກໍານົດຂອງຣັຖບານກາງ, ເວົາເຈີແບບເຈັ້ງ ບໍ່ສາມາດນໍາໃຊ້ໄດ້ອີກຕໍ່ໄປສໍາລັບໄລຍະການຈ່າຍຄ່າຈ້າງໃນປັດຈຸບັນ ຫຼື ໃນອະນາຄົດ. ບັນດາຜູ້ໃຫ້ບໍລິການຕ້ອງນໍາໃຊ້ລະບົບ OR PTC DCI ເພື່ອປ້ອນຂໍ້ມູນເວລາຂອງເຂົາເຈົ້າທາງອີເລັກໂຕຣນິກ.

**ຈະເຮັດແນວໃດ ຖ້າວ່າ ຂ້າພະເຈົ້າຕ້ອງການຄວາມຊ່ວຍເຫຼືອໃນການຕັດສິນໃຈເລືອກອຸປະກອນ OR PTC DCI ທີ່ດີທີ່ສຸດສໍາລັບຂ້າພະເຈົ້າ?**

ການຕິດຕໍ່ຫາ ຜູ້ຈັດການກໍລະນີຂອງຜູ້ບໍລິໂພກ ແມ່ນຂັ້ນຕອນທໍາອິດທີ່ດີ. ແບ່ງປັນປະເພດຂອງເຕັກໂນໂລຊີທີ່ທ່ານໄດ້ເຂົ້າເຖິງ ແລະເຂົາເຈົ້າສາມາດຊ່ວຍທ່ານຕັດສິນໃຈໄດ້ວ່າ ຕົວເລືອກລະບົບ OR PTC DCI ອັນໃດທີ່ເໝາະສົມກັບທ່ານ. ນອກຈາກນີ້ ທ່ານສາມາດຊອກຫາແຫຼ່ງຊ່ວຍເຫຼືອ ເພື່ອຊ່ວຍທ່ານຕັດສິນໃຈໄດ້ ທີ່ເວັບໄຊ PTC.Oregon.gov.

**ມີຟັງຊັ່ນດ້ານພາສາ ແລະການເຂົ້າເຖິງ ຫຍັງແດ່ທີ່ມີໃຫ້ໃນລະບົບ OR PTC DCI?**

OR PTC DCI ປະຕິບັດຕາມມາດຕະຖານຂອງຣັຖບານກາງດ້ານການເຂົ້າເຖິງ ແລະສາມາດນໍາໃຊ້ໄດ້ດ້ວຍໂປຣແກຣມອ່ານໜ້າຈໍ. ມີໃຫ້ໃນພາສາອັງກິດ, ສະເປນ, ຣັດເຊັຽ, ຈີນ, ວຽດນາມ, ອາຣາບິກ, ແລະໂຊມາລີ. ຈະມີການເພີ່ມພາສາອື່ນໆ ອີກໃນໄວໆ ນີ້.

ສື່ການຝຶກອົບຮົມ ແລະໃບບັນທຶກເວລາເຮັດວຽກໃນລະບົບ OR PTC DCI fob ມີໃຫ້ໃນພາສາອັງກິດ, ສະເປນ, ອາຣາບິກ, ຟາຊີ, ກໍາປູເຈັຍ, ເກົາຫຼີ, ລາວ, ເນປານ, ໂຣມາເນັຍ, ຣັດເຊັຽ, ຈີນແບບໃໝ່, ໂຊມາລີ, ສະເປນ, ຈີນແບບເກົ່າ, ແລະວຽກນາມ,

**ຈະເກີດຫຍັງຂຶ້ນ ຖ້າວ່າ ຜູ້ໃຫ້ບໍລິການກວດກາເບິ່ງຊົ່ວໂມງທີ່ອະນຸມັດຂອງເຂົາເຈົ້າໃນລະບົບ OR PTC DCI?**

ຖ້າວ່າ ຈໍານວນຊົ່ວໂມງທີ່ທ່ານປ້ອນໃສ່ກາຍຈໍານວນຊົ່ວໂມງທີ່ອະນຸມັດໃຫ້, ມັນຈະເຮັດໃຫ້ເກີດຂໍ້ຜິດພາດໃນລະບົບ OR PTC DCI. ທ່ານຈະຍັງຄົງສາມາດສ້າງລາຍການຂໍ້ມູນເວລາໄດ້, ຢ່າງໃດກໍຕາມ, ລາຍການນີ້ຈະບໍ່ຖືກຈ່າຍຄ່າຈ້າງໃຫ້ຈົນກວ່າ ມັນຈະຖືກແກ້ໄຂເພື່ອໃຫ້ຢູ່ໃນຈໍານວນຊົ່ວໂມງທີ່ອະນຸມັດໃຫ້. ເບິ່ງສື່ການຮຽນຮູ້ໃນລະບົບ OR PTC DCI ເພື່ອຮຽນຮູ້ຕື່ມກ່ຽວກັບວິທີການແກ້ໄຂລາຍການເວລາຂອງທ່ານ.

**ຜູ້ໃຫ້ບໍລິການຫຼາຍຄົນສາມາດລົງໂມງເຂົ້າວຽກ ແລະເຮັດວຽກສໍາລັບຜູ້ບໍລິໂພກຄົນດຽວກັນໃນເວລາດຽວກັນໃນລະບົບ OR PTC DCI ໄດ້ແມ່ນບໍ່?**

ແມ່ນ, ເຂົາເຈົ້າສາມາດເຮັດໄດ້.

**ສຳລັບເວົ້າເຈີແບບເຈັ້ງ, ຜູ້ໃຫ້ບໍລິການສາມາດຂຽນບອກໝາຍເຫດໄວ້ເທິງດ້ານຫຼັງຂອງ ເວົາເຈີໄດ້ ເພື່ອສະແດງວຽກທີ່ໄດ້ເຮັດໄປແລ້ວ. ການເຮັດແບວນີ້ຈະເຮັດໃນລະບົບ OR PTC DCI ໄດ້ບໍ່?**

ໄດ້, ຜູ້ໃຫ້ບໍລິການສາມາດຂຽນບອກໝາຍເຫດໄວ້ໃນລາຍການລົງເວລາໃນ OR PTC DCI (ໃນ ເວັບໄຊລວມ ຫຼື ແອັບມືຖື). ຜູ້ຈັດການກໍລະນີຈະສາມາດເບິ່ງໝາຍເຫດເຫຼົ່ານີ້ໃນ OR PTC DCI ໄດ້. ໝາຍເຫດລາຍການ ແມ່ນທາງເລືອກທີ່ເຮັດໄດ້ເລີຍ ແລະບໍ່ຄວນໃຊ້ສຳລັບການສື່ສານໃນກໍລະນີສຸກເສີນ.